ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

****

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
LAO AGROTECH PUBLIC COMPANY
ບ້ານໜອງຄັນຄູ ເມືອງນາຊາຍທອງ
ແຂວງນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ 030-988-2809

ເລກທີ: 089 /ລອທ

ນະຄອນຫຼວງວຽງຈັນ,ເລກທີ: 09 JUL 2024

ບົດລາຍງານ ຄວາມຄືບໜ້າຂອງການຂາດທຶນ

ຮຽນ: ທ່ານ ຫົວໜ້າສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບລາວ ທີ່ນັບຖື.
ທ່ານ ຜູ້ອໍານວຍການໃຫ່ຍຕະຫຼາດຫຼັກຊັບລາວ ທີ່ນັບຖື.
ທ່ານ ຜູ້ຖືຮຸ້ນຂອງ ບໍລິສັດ ລາວອາໂກຣເທັກ ມະຫາຊົນ ທີ່ນັບຖື.

ເລື່ອງ: ບົດລາຍງານ ຄວາມຄືບໜ້າການຈັດຕັ້ງປະຕິບັດແຜນປັບປຸງແກ້ໄຂການຂາດທຶນຂອງບໍລິສັດ ລາວອາໂກຣເທັກ ມະຫາຊົນ ປະຈໍາປີ 2024.

- ອີງຕາມ: ລະບຽບວ່າດ້ວຍການຈົດທະບຽນຮຸ້ນ(ສະບັບປັບປຸງ) ເລກທີ 007/23 ຕລຊລ, ລົງວັນທີ 12 ກັນຍາ 2023 ມາດຕາ 26.
- ອີງຕາມ: ໜັງສື ແຈ້ງການກ່ຽວກັບການຮັກສາສະຖານະການເປັນບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ 575/ຕລຊລ , ລົງວັນທີ 16 ພຶດສະພາ 2024
- ອີງຕາມ: ແຜນປັບປຸງແກ້ໄຂການຂາດທຶນຂອງ ບໍລິສັດ ລາວອາໂກຣເທັກ ມະຫາຊົນ ປະຈໍາປີ 2024 ສະບັບເລກທີ 074/ ລອທ,ລົງວັນທີ 19 ເມສາ 2024

ບໍລິສັດ ລາວອາໂກຣເທັກ ມະຫາຊົນ ໄດ້ປະຕິບັດຕາມແຜນແກ້ໄຂຂາດທຶນຕາມເອກະສານແຜນແກ້ໃຫ້ຕະຫຼາດຫຼັກຊັບ ສະບັບເລກທີ 074/ລອທ,ລົງວັນທີ 19 ເມສາ 2024 ໂດຍທາງບໍລິສັດໄດ້ປະຕິບັດຕາມແຜນງົບປະມານ ປະຈໍາປີ 2024 ໃນຊ່ວງ 6 ເດືອນຕົ້ນປີ 2024 ເຊິ່ງມີລາຍລະອຽດດັ່ງນີ້:

ລາຍການສິນຄ້າ	ຫົວໜ່ວຍ		ລາຍໄດ້(ລ້ານກີບ)	ຄິດເປັນເປີເຊັນຂອງແຜນຂາຍ
ນ້ຳມັນປາມດິບ	800,71	ໂຕ້ນ	18,651	33%
ຕົ້ນກ້າປາມ	15,712,00	ຕົ້ນ	436	6%
ກາກປາມ	309,17	ກິໂລ	1,139	38%
ປຸ໋ຍ	75,55	ກິໂລ	1,126	22%
ລາຍໄດ້ອື່ນໆ(ນ້ຳມັນພືດ/ນ້ຳມັນກາຊອນB5)			157	

❖ ບໍລິສັດຈະສືບຕໍ່ແຜນການດໍາເນີນທຸລະກິດ

- ແຜນການຂາຍນ້ຳມັນປາມດິບCPO: ບໍລິສັດຄາດຄະເນການຂາຍໂດຍອີງໃສ່ການຜະລິດຂອງບໍລິສັດ. ບວກກັບຄວາມ ຕ້ອງການຂອງຜູ້ບໍລິໂພກ ບໍລິສັດ ມີນະໂຍບາຍຖານລູກຄ້າໃນປີ 2024.
- ແຜນການຂາຍປາມ: ບໍລິສັດຄາດຄະເນການຂາຍໂດຍອີງໃສ່ຄວາມຕ້ອງການຊື້ຂອງຜູ້ບໍລິໂພກໃນປະຈຸບັນ. ບໍລິສັດມີ ນະໂຍບາຍຂະຫຍາຍຖານລູກຄ້າໃນປີ 2024.

- ແຜນການຂາຍປຸ໋ຍ ໃນໄລຍະປີ 2019-2021 ເນື່ອງຈາກສະພາບການລະບາດໂຄວິດ-19 ບໍລິສັດຂາດກະສິ່ງເສີມຊາວກະສິກອນ, ເຮັດໃຫ້ຜົນຜະລິດປາມໃນປີຜ່ານມາຫຼຸດລົງຫຼາຍ, ໃນປີ 2024 ບໍລິສັດໄດ້ສິ່ງເສີມຊາວກະສິກອນ(ລູກສອນບໍລິສັດ ແລະ ສອນນອກບໍລິສັດ) ເພື່ອໃສ່ປຸ໋ຍປາມຕື່ມ. ໃນເດືອນກຸມພາ, ການຈອງຈາກຊາວກະສິກອນກອມເອົາ 33 ສ່ວນຮ້ອຍຂອງຈານວນການຜະລິດຕະພັນທີ່ຄາດຄະເນຂາຍ.
- ແຜນການຂາຍເບ້ຍປາມ: ບໍລິສັດໄດ້ວາງແຜນການເພື່ອຂໍການຢັ້ງຢືນແນວພັນປາມລາວວຽງ. ເພື່ອສົ່ງອອກ ແລະ ຄາດຄະເນການຂາຍຕາມປະລິມານຂອງບໍລິສັດ ມັນຈະຖືກຜະລິດໃນປີ 2024.
- ແຜນການຂາຍນ້ຳມັນເຊື້ອໄຟຂອງບໍລິສັດຈະເຮັດບົດວິພາກ ແລະ ນຳສະເໜີຕໍ່ກະຊວງອຸດສາຫະກຳ ແລະ ການຄ້າ. ເພື່ອຮ້ອງຂໍໂຄຕ້ານຳເຂົ້ານ້ຳມັນ.

ດັ່ງນັ້ນ, ຈຶ່ງເຮັດບົດລາຍງານ ສະບັບນີ້ຍັງທ່ານເພື່ອຊາບ.

ຮຽນມາດ້ວຍຄວາມນັບຖືຢ່າງສູງ
ບໍລິສັດ ລາວອາໂກຣເທັກ ມະຫາຊົນ
ຜູ້ອຳນວຍການ

ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ Lao Agro Tech Public Company

ເສດ ພັດທະນະມາດ
Zait PATTANAMAS